Lycée Français International de Vientiane Josué-Hoffet

Liberté • Égalité • Fraternité
RÉPUBLIQUE FRANÇAISE
AMBASSADE DE FRANCE AU LAOS

ÉTABLISSEMENT CONVENTIONNÉ — aefe Agence pour l'enseignement français à l'étranger

# ກົດລະບຽບພາຍໃນ
# ຊັ້ນອະນຸບານ-ປະຖົມ ປີການສຶກສາ 2020-2021

ເອກະສານຖືກຮັບຮອງໃນກອງປະຊຸມສະພາໂຮງຮຽນຊັ້ນອະນຸບານ-ປະຖົມ ວັນທີ 23/06/2020

## <u>1</u> <u>ຮູບແບບການດຳເນີນການສິດສອນ:</u>

- **ຊົ່ວໂມງຮຽນ**: ນັກຮຽນມີຮຽນທັງໝົດ 26 ຊົ່ວໂມງ/ຕໍ່ອາທິດ.

<u>ບັນດາຊົ່ວໂມງຮຽນມີດັ່ງນີ້:</u>

**ທີ່ໂຮງຮຽນທ່າເດື່ອ ຊັ້ນອະນຸບານ ແລະ ປະຖົມ** :

✓ ຕອນເຊົ້າ : ວັນຈັນ, ວັນອັງຄານ, ວັນພະຫັດ ແລະ ວັນສຸກ : 8h ຫາ 11h30 ແລະ ວັນພຸດ ແຕ່ 8h ຫາ 12h (ຕອນເຊົ້ານັກຮຽນສາມາດເຂົ້າໃນບໍລິເວນໂຮງຮຽນໄດ້ນັບຕັ້ງແຕ່ 7h30)

✓ ຕອນສວຍ : ວັນຈັນ, ວັນອັງຄານ, ວັນພະຫັດ ແລະ ວັນສຸກ: 13h30 ຫາ 15h30.

**<u>ຂາດຮຽນ ແລະ ມາໂຮງຮຽນຊ້າ</u>**

ການຂາດຮຽນຕ້ອງແຈ້ງເປັນລາຍລັກອັກສອນໂດຍຜູ້ປົກຄອງ ຫຼື ຜູ້ຮັບຜິດຊອບນັກຮຽນ. ໃນກໍລະນີທີ່ມີການຂາດຮຽນເລື້ອຍ, ຄອບຄົວຈະຖືກເຊີນມາໂອ້ລົມໂດຍຜູ້ອຳນວຍການໂຮງຮຽນ. ບໍ່ອະນຸຍາດໃຫ້ມາໂຮງຮຽນຊ້າ.

**<u>ກິດຈະກຳການສິດສອນເພີ່ມສຳລັບນັກຮຽນຊັ້ນປະຖົມ (ຮຽນເພີ່ມ)</u>** ຈັດຂຶ້ນທຸກໆວັນອັງຄານ ແລະ ວັນພະຫັດ ໃນຊົ່ວໂມງພັກອາຫານທ່ຽງ ໄຊ້ເວລາເຄິ່ງຊົ່ວໂມງ ແຕ່ 13h ຫາ 13h30. ຊົ່ວໂມງຮຽນເພີ່ມດັ່ງກ່າວຈະຖືກສະເໜີຕໍ່ນັກຮຽນບາງຈຳນວນໂດຍຄູປະຈຳຫ້ອງສຳລັບໄລຍະເວລາໃດໜຶ່ງ ແລະ ໂດຍໄດ້ຮັບການເຫັນດີຈາກຜູ້ປົກຄອງ.

**<u>ການຮັບຕອ້ນນັກຮຽນ</u>**: ນັກຮຽນສາມາດເຂົ້າໃນບໍລິເວນໂຮງຮຽນ ແລະ ຈະຖືກຮັບຕອ້ນໂດຍບັນດາຜູ້ດູແລນັກຮຽນທີ່ເດີ່ນທາງເຂົ້າ: ຕອນເຊົ້າ ນັບຕັ້ງແຕ່ 7h30 ແລະ ຕອນສວຍໂດຍຄູປະຈຳຫ້ອງ ຕັ້ງແຕ່ 13h30. ເວລາເຕົ້າໂຮມນັກຮຽນເຂົ້າຫ້ອງຮຽນ 8h ແລະ 13h30 (ສຳລັບນັກຮຽນແຕ່ຊັ້ນ CP ຫາ CM2 ທີ່ເດີ່ນກິລາ ແລະ ສຳລັບຊັ້ນອະນຸບານທີ່ຫ້ອງຮຽນໂດຍກົງ). ນັກຮຽນຈະຢູ່ພາຍໃຕ້ຄວາມຮັບຜິດຊອບຂອງຄູ.

**<u>ຊົ່ວໂມງເລີກຫຼິ້ນໃນຕອນເຊົ້າທີ່ຖືກກຳນົດ:</u>** ສຳລັບຊັ້ນປະຖົມ ແລະ ຫ້ອງອະນຸບານ PS/MS ແຕ່ 9h50 ຫາ 10h10, ສຳລັບຫ້ອງອະນຸບານ GS ແຕ່ 10h00 ຫາ 10h20.

**<u>ພັກຜ່ອນ-ອາຫານທ່ຽງ</u>**:

✓ ນັກຮຽນມີສອງທາງເລືອກ: ສະໝັກກິນເຂົ້າສວຍກັບຮ້ານອາຫານໃນໂຮງຮຽນ ຫຼື ອອກກິນເຂົ້ານອກໂຮງຮຽນ.

✓ ນັກຮຽນທຸກຄົນທີ່ສະໝັກກິນເຂົ້າສວຍກັບຮ້ານອາຫານໃນໂຮງຮຽນ, ກໍລະນີນີ້ນັກຮຽນຈະບໍ່ມີສິດອອກນອກບໍລິເວນໂຮງຮຽນ ລະຫວ່າງ 11h30 ຫາ 13h30.

✓ ນັກຮຽນທີ່ກິນເຂົ້ານອກໂຮງຮຽນ ຜູ້ປົກຄອງ ຫຼື ຜູ້ຮັບຜິດຊອບທີ່ຖືກມອບໝາຍຈາກຜູ້ປົກຄອງຕອ້ງມາຮັບ ເວລາ 11h30, ກໍລະນີນີ້ນັກຮຽນຈະບໍ່ມີສິດອອກນອກບໍລິເວນໂຮງຮຽນເອງຜູ້ດຽວ.

**<u>ຊົ່ວໂມງດູແລນັກຮຽນຊັ້ນອະນຸບານ</u>**: ຊົ່ວໂມງດັ່ງກ່າວຈະຖືກຮັບຜິດຊອບໂດຍພະນັກງານດູແລນັກຮຽນໃນທຸກໆວັນ ແຕ່ 15h30 ຫາ 16h20 ທີ່ໂຮງຮຽນທ່າເດື່ອ. ຊຶ່ງຄ່າບໍລິການດູແລນັກຮຽນນີ້ໄດ້ຖືກຄິດໄລ່ລວມເຂົ້າໃນຄ່າຮຽນແລ້ວ. ທຸກຄັ້ງຈະມີການໝາຍຊື່ນັກຮຽນທີ່ມີໜ້າ.

**<u>ກິດຈະກຳນອກໂມງຮຽນ</u>** : ກິດຈະກຳນອກໂມງຮຽນຖືກຈັດຂຶ້ນແຍກຕ່າງຫາກ. ໂຮງຮຽນຈະຮັບຜິດຊອບສະເພາະນັກຮຽນທີ່ໄດ້ສະໝັກ ແລະ ມີໜ້າໃນຊົ່ວໂມງກິດຈະກຳທີ່ກຳນົດເທົ່ານັ້ນ. ພາຍຫຼັງເລີກຮຽນກິດຈະກຳຮຽກຮອ້ງໃຫ້ຜູ້ປົກຄອງຈົ່ງມາຮັບລູກຂອງທ່ານກັບຜູ້ຮັບຜິດຊອບໃຫ້ຕົງເວລາ.

- **ປະຕິທິນປີການສຶກສາ**: ປີການສຶກສາດຳເນີນຂຶ້ນໃນໄລຍະເວລາ 36 ອາທິດ. ປະຕິທິນມື້ພັກຕ່າງໆໄດ້ຖືກສະເໜີຕໍ່ກອງປະຊຸມສະພາຊັ້ນອະນຸບານ-ປະຖົມ ແລະ ໄດ້ຮັບການອະນຸມັດໃນກອງປະຊຸມສະພາໂຮງຮຽນ, ໂດຍອີງໃສ່ຄວາມສະດວກສູງສຸດຂອງນັກຮຽນ ແລະ ໂດຍການເຫັນດີຈາກ AEFE.
- **ສະໝັກຮຽນ**: ໃນຊັ້ນອະນຸບານປີທຳອິດ PS ແມ່ນຮັບສະໝັກເດັກທີ່ມີອາຍຸ3ປີເຕັມໃນປີການສຶກສາ ເກີດຢ່າງຊ້າສຸດ ວັນທີ 31 ທັນວາ. ນັກຮຽນທີ່ຍັງບໍ່ເຕັມ3ປີແຕ່ມີພັດທະນາການໄວສາມາດສະໝັກເຂົ້າຮຽນຫອ້ງ PS ໄດ້ ແຕ່ໃນກໍລະນີທີ່ມີບອ່ນວ່າງໃນຊັ້ນຮຽນ ແລະ ໃຫ້ຮັບຮູ້ນຳກັນວ່ານັກຮຽນດັ່ງກ່າວຈະຕອ້ງໄດ້ຮຽນຊ້ຳຄືນຫອ້ງ PS ໃນປີການຮຽນຕໍ່ໄປ. ຊັ້ນປະຖົມປີທຳອິດຈະຮັບສະໝັກນັກຮຽນອາຍຸ6ປີເຕັມໃນປີການສຶກສາ ເກີດຢ່າງຊ້າສຸດ ວັນທີ 31 ທັນວາ.

  <u>ເອກະສານທີ່ຕອ້ງຕິດຂັດມາກັບແບບຟອມຂໍສະໝັກຮຽນ:</u> ສຳເນົາປື້ມສຳມະໂນຄົວ, ປື້ມຕິດຕາມການສັກຢາກັນພະຍາດທີ່ຈຳເປັນ, ໃບຍົກຍ້າຍໂຮງຮຽນຈາກໂຮງຮຽນເກົ່າ ແລະ ເອກະສານການຮຽນຖ້ານັກຮຽນໄດ້ຮຽນໃນໂຮງຮຽນອື່ນມາກອ່ນ.
- **ຍົກຍ້າຍໂຮງຮຽນ** : ຄອບຄົວຕອ້ງແຈ້ງໃຫ້ໂຮງຮຽນຊາບກ່ຽວກັບການເອົາລູກອອກ ຫຼື ຍົກຍ້າຍໂຮງຮຽນ, ພາຍຫຼັງຊຳລະຄ່າຮຽນຄົບຖ້ວນ ແລະ ສົ່ງຄືນປື້ມ ແລະ ອຸປະກອນການຮຽນຕ່າງໆທີ່ຢືມຈາກໂຮງຮຽນ, ໂຮງຮຽນຈະອອກເອກະສານຍົກຍ້າຍໂຮງຮຽນທີ່ຈຳເປັນເພື່ອສາມາດສະໝັກຮຽນຕໍ່ທີ່ໂຮງຮຽນໃໝ່ ແລະ ຈະມອບເອກະສານການຮຽນທັງໝົດໃຫ້ຜູ້ປົກຄອງ.
- **ກໍລະນີຈຳເປັນ,** ຄອບຄົວນັກຮຽນທີ່ມີສັນຊາດຝຣັ່ງສາມາດຂໍທຶນການສຶກສາ. ແບບຟອມຂໍທຶນການສຶກສາສາມາດຂໍຮັບເອົາໄດ້ທີ່ພະແນກກົງສຸນຂອງສະຖານທູດຝຣັ່ງ. ການປະຊຸມເພື່ອພິຈາລະນາ ແລະ ຄັດເລືອກເອກະສານຂໍທຶນການສຶກສາຈະປະຊຸມກັນ 2ຄັ້ງຕໍ່ປີ.

## 2. <u>ການຕິດຕໍ່ພົວພັນລະຫວ່າງ ຜູ້ປົກຄອງ ແລະ ຄູ:</u>

- ການປະຊຸມແຕ່ລະຊັ້ນຮຽນຈະຖືກຈັດຂຶ້ນໃນຕົ້ນປີການສຶກສາ, ໃນໄລຍະປະຊຸມຄູຈະສະເໜີບັນດາເປົ້າໝາຍ ແລະ ໂຄງການໃນປີການສຶກສາປະຈຸບັນ; ຊຶ່ງຜູ້ປົກຄອງສາມາດຖາມຄຳຖາມທົ່ວໄປທີ່ກ່ຽວກັບການໃຊ້ຊີວິດໃນໂຮງຮຽນ ແລະ ໃນຫ້ອງຮຽນ. ອາດຈະມີການຈັດປະຊຸມອື່ນໆອີກໃນໄລຍະປີການສຶກສາ.
- ນັກຮຽນແຕ່ລະຄົນຈະມີປຶ້ມຕິດຕາມການຮຽນຂອງຕົນທີ່ຮວບຮວມຂໍ້ມູນ ແລະ ເອກະສານຕ່າງໆກ່ຽວກັບການໃຊ້ຊີວິດໃນໂຮງຮຽນ ແລະ ໃນຫ້ອງຮຽນ, ໃຫ້ຜູ້ປົກຄອງຈົ່ງເປີດອ່ານຢ່າງສະໝ່ຳສະເໝີ ແລະ ເຊັນຮັບຮູ້. ປຶ້ມຕິດຕາມນີ້ຈະຢູ່ໃນກະເປົາຂອງນັກຮຽນສະເໝີ ແລະ ຍັງເປັນອຸປະກອນໃຊ້ເພື່ອຂໍນັດພົບລະຫວ່າງຜູ້ປົກຄອງ-ຄູປະຈຳຫ້ອງ ແລະ ເພື່ອໃຫ້ຜູ້ປົກຄອງໄດ້ແຈ້ງຂໍອະນຸຍາດລາພັກສຳລັບເດັກ.
- ຜົນການຮຽນນັກຮຽນຊັ້ນປະຖົມຈະຖືກລະບຸໃນໃບປະເມີນຜົນການຮຽນທີ່ຈະຖືກມອບໃຫ້ຜູ້ປົກຄອງໂດຍຕ້ອງເຊັນຢັ້ງຢືນການໄດ້ຮັບນີ້; ບາງຄັ້ງຈະມີປຶ້ມປະເມີນຜົນການຮຽນຕິດຂັດໄປນຳຊຶ່ງຜູ້ປົກຄອງຕ້ອງເຊັນຮັບຮູ້ ແລະ ຕ້ອງສົ່ງຄືນໃຫ້ຄູ.
- ສຳລັບນັກຮຽນຊັ້ນອະນຸບານປຶ້ມຕິດຕາມການຮຽນຈະຖືກມອບໃຫ້ຜູ້ປົກຄອງຢ່າງໜ້ອຍ 2ຄັ້ງ ໃນປີການສຶກສາ.
- ຄູ, ອຳນວຍການຊັ້ນອະນຸບານ-ປະຖົມ ແລະ ອຳນວຍການໃຫຍ່ຂອງໂຮງຮຽນພ້ອມສະເໝີທີ່ຈະໃຫ້ຂໍ້ມູນ ແລະ ໃຫ້ຄວາມກະຈ່າງແຈ້ງຕໍ່ຜູ້ປົກຄອງ. ສຳລັບເວລານອກໂມງຮຽນຈົ່ງແຈ້ງຂໍນັດພົບລ່ວງໜ້າກ່ອນສອງສາມມື້ ຍົກເວັ້ນກໍລະນີຮີບດ່ວນ.
- ບົດບັນທຶກການປະຊຸມຂອງສະພາໂຮງຮຽນຊັ້ນອະນຸບານ-ປະຖົມ, ຂອງສະພາໂຮງຮຽນ ແລະ ຂອງສະພາຄຸ້ມຄອງໂຮງຮຽນຈະຖືກຕິດໄວ້ໃຫ້ອ່ານທີ່ກະດານຂ່າວທາງເຂົ້າໂຮງຮຽນ ແລະ ພາຍຫຼັງໄດ້ຮັບການອະນຸມັດບົດບັນທຶກຈະຖືກລົງໃນເວບໄຊ້ຂອງໂຮງຮຽນ.
- ຜູ້ປົກຄອງຕິດພັນກັບການໃຊ້ຊີວິດໃນໂຮງຮຽນຂອງເດັກໂດຍຜ່ານຄະນະຜູ້ຕາງໜ້າຂອງພວກເຂົາໃນສະພາຄຸ້ມຄອງໂຮງຮຽນ, ໃນສະພາໂຮງຮຽນຊັ້ນອະນຸບານ-ປະຖົມ ແລະ ໃນສະພາໂຮງຮຽນ.
- ໂຄງການການສຶກສາຊັ້ນອະນຸບານ-ປະຖົມເປັນສ່ວນໜຶ່ງຂອງໂຄງການການສຶກສາຂອງໂຮງຮຽນ ຊຶ່ງນະໂຍບາຍໄດ້ຖືກກຳນົດໃຫ້ປະຕິບັດໃຊ້ສຳລັບໄລຍະ 3ປີ ຫຼື 4ປີ ສຳລັບທຸກລະດັບຊັ້ນຮຽນເພື່ອດຳເນີນແນວທາງການສຶກສາໃນໄລຍະກາງ, ໂຄງການການສຶກສາຂອງຊັ້ນອະນຸບານ-ປະຖົມຈະຖືກສະເໜີ, ຖືກນຳມາພິຈາລະນາ ແລະ ຖືກລົງຄະແນນສຽງຮັບຮອງໂດຍສະພາໂຮງຮຽນຊັ້ນອະນຸບານ-ປະຖົມ ແລະ ຕໍ່ມາໂດຍສະພາໂຮງຮຽນ.

## 3. <u>ຫຼັກການພື້ນຖານໃນການເຄົາລົບສິດດ້ານການສຶກສາ, ສຸກຂະອານະໄມ, ສຸຂະພາບ ແລະ ຄວາມປອດໄພ:</u>

- **ການສິດສອນ-ສຶກສາ:**

ໂຮງຮຽນພະຍາຍາມຮັກສາມາດຕະຖານການສິດສອນໃຫ້ມີຄຸນນະພາບ : ຄູສອນສ່ວນໃຫຍ່ມີໃບປະກາດຮັບຮອງຈາກກະຊວງສຶກສາທິການຝຣັ່ງ. ຫຼັກສູດ ແລະ ເປົ້າໝາຍການສິດສອນແມ່ນປະຕິບັດຕາມຫຼັກເກນຂອງກະຊວງສຶກສາຝຣັ່ງທີ່ໄດ້ວາງອອກ.

ຄູທີ່ຂາດສອນຈະມີຄູອື່ນມາສອນແທນ ຊຶ່ງເປັນໄປໄດ້ທີ່ຈະເປັນຄູທີ່ໄດ້ສະໝັກເພື່ອສອນແທນ, ໃນກໍລະນີຈຳເປັນນັກຮຽນຈະຖືກແບ່ງໄປຮຽນຮ່ວມກັບນັກຮຽນຫ້ອງອື່ນ.

ຜູ້ປົກຄອງ, ຄູ ແລະ ນັກຮຽນເອງ ແຕ່ລະຄົນຕ້ອງເຄົາລົບໂມງຮຽນ ແລະ ຕ້ອງຕົງເວລາ. ການຂໍອະນຸຍາດລາພັກຂອງນັກຮຽນຕ້ອງມີໃບຢັ້ງຢືນເປັນລາຍລັກອັກສອນຈາກຜູ້ປົກຄອງ ແລະ ຕ້ອງມອບໃຫ້ຄູປະຈຳຫ້ອງໂດຍກົງ.

ນັກຮຽນແຕ່ລະຄົນຕ້ອງມີອຸປະກອນການຮຽນທີ່ຈຳເປັນທີ່ໄດ້ຮັບທັງຈາກໂຮງຮຽນ ແລະ ທັງຈາກຄອບຄົວ.

ດ້ວຍເຫດຜົນດ້ານຄວາມປອດໄພ, ຮຽກຮ້ອງໃຫ້ນັກຮຽນບໍ່ຕ້ອງເອົາເງິນ ຫຼື ສິ່ງຂອງມີຄ່າມາໂຮງຮຽນເຊັ່ນ : ເຄື່ອງປະດັບລາຄາແພງ, ກ້ອງຖ່າຍຮູບ ແລະ ອື່ນໆ.

- **ສຸຂະພາບ, ສຸກຂະອານະໄມ ແລະ ຄວາມສະອາດ** :

ສະຖາບັນການສຶກສາຖືກຮັກສາໃຫ້ຢູ່ໃນສະພາບທີ່ສະອາດເໝາະສົມ, ມີນ້ຳດື່ມບໍລິສຸດສຳລັບນັກຮຽນ ຊຶ່ງພວກເຂົາຕ້ອງມີຈອກກິນນ້ຳຂອງຕົນ, ດ້ວຍເຫດຜົນດ້ານສຸກຂະອານະໄມ ໂຮງຮຽນຈະບໍ່ມີຈອກນ້ຳໃຫ້ອີກຕໍ່ໄປ.

ນັກຮຽນທີ່ມີໜ້າໃນໂຮງຮຽນຕ້ອງຢູ່ໃນເງື່ອນໄຂສຸຂະພາບແຂງແຮງ ແລະ ມີຄວາມສະອາດເໝາະສົມ.

ອະນຸຍາດໃຫ້ນັກຮຽນເອົາອາຫານວ່າງຂອງຕົນມານຳໄດ້ສຳລັບກິນໃນໄລຍະເລີກຫຼິ້ນຕອນເຊົ້າ:

- ສຳລັບຊັ້ນອະນຸບານ ອາຫານວ່າງສາມັກຄີໃນຕອນເຊົ້າຈະຖືກກະກຽມໂດຍຄູປະຈຳຫ້ອງ ຜູ້ປົກຄອງແຕ່ລະຄົນຈະຖືກຂໍໃຫ້ປ່ຽນຜຽນກັນເອົາອາຫານວ່າງມາ. ອາຫານວ່າງສາມັກຄີນີ້ຕ້ອງເປັນປະເພດໝາກໄມ້ ຫຼື ນົມສົ້ມເທົ່ານັ້ນຈຶ່ງຈະໄດ້ຮັບອະນຸຍາດ.
- ສຳລັບຊັ້ນປະຖົມອາຫານວ່າງປະເພດໝາກໄມ້ເທົ່ານັ້ນຈຶ່ງຈະໄດ້ຮັບອະນຸຍາດ.
- ໝາຍເຫດ: ຫ້າມນຳເຂົ້າໜົມປະເພດດັ່ງກ່າວເຂົ້າມາໃນໂຮງຮຽນ: ສະວິງໂກມ, ເຂົ້າໜົມອົມ, ເຂົ້າໜົມຫວານ, ມັນຝຣັ່ງຈືນ, ໝີ່ແຫ້ງ, ນ້ຳອັດລົມ ຫຼື ນ້ຳຫວານ .... ໃນກໍລະນີຍົກເວັ້ນ ເຂົ້າໜົມເຄັກວັນເກີດ ແລະ ອາຫານວ່າງບາງປະເພດໄດ້ຮັບອະນຸຍາດໃຫ້ເອົາມາໄດ້ເພື່ອສະຫຼອງບາງງານ.
- ຫ້າມເອົານ້ຳດື່ມ ຫຼື ອາຫານເຂົ້າມາກິນໃນຫ້ອງສະໝຸດເດັດຂາດ.

ໃນກໍລະນີທີ່ນັກຮຽນມີບັນຫາສຸຂະພາບບໍ່ສາມາດມາຮຽນໄດ້, ຄອບຄົວຕ້ອງແຈ້ງທາງໂຮງຮຽນພາຍໃນມື້ ທີ່ເບີ **021 260 926** ຫຼື ແຈ້ງທາງອີເມວ <u>secretariat.primaire@lfiv.org</u> ພາຍຫຼັງກັບເຂົ້າມາຮຽນຜູ້ປົກຄອງຕ້ອງຂຽນຈົດໝາຍແຈ້ງຂາດແນບໃສ່ປຶ້ມຕິດຕາມການຮຽນ ຫຼື ຂຽນແຍກເປັນຈົດໝາຍຕ່າງຫາກ.

ໂຮງຮຽນມີຫ້ອງຮັກສາພະຍາບານ ຊຶ່ງເປັນສະຖານທີ່ຕ້ອນຮັບ ແລະ ຮັບຟັງ ເປີດປົກກະຕິໃນເວລາຮຽນ. ການປະຖົມພະຍາບານເບື້ອງຕົ້ນຮັບຜິດຊອບໂດຍພະຍາບານຂອງໂຮງຮຽນທີ່ມີອຸປະກອນເໝາະສົມ ຫຼື ໃນກໍລະນີພະຍາບານຂອງໂຮງຮຽນບໍ່ຢູ່ ການປະຖົມພະຍາບານຈະຖືກຮັບຜິດຊອບໂດຍພະນັກງານຂອງໂຮງຮຽນຜູ້ທີ່ໄດ້ຮັບການຝຶກອົບຮົມເປັນຢ່າງດີ.

ໃນກໍລະນີເກີດອຸບັດຕິເຫດ ຫຼື ມີບັນຫາດ້ານສຸຂະພາບທີ່ຈຳເປັນຕ້ອງການການຮັກສາຈາກແພດ ຖ້າຈຳເປັນໂຮງຮຽນຈະຕິດຕໍ່ຜູ້ປົກຄອງ ແລະ ໃຫ້ຄຳປຶກສາ. ໃນກໍລະນີສຸກເສີນເຖິງແກ່ຊີວິດ ແລະ ຖ້າບໍ່ສາມາດຕິດຕໍ່ຜູ້ປົກຄອງໄດ້ ໂຮງຮຽນຈະແຈ້ງຂໍຄວາມຊ່ວຍເຫຼືອຈາກໜ່ວຍກູ້ໄພນະຄອນຫຼວງ.

ໃນກໍລະນີມີປັນຫາສຸຂະພາບໄລຍະຍາວ ຫຼື ອາການແພ້ຕ່າງໆທີ່ຕ້ອງການໃຊ້ຢາເປັນປະຈຳພາຍໃນໂຮງຮຽນ, ໜັງສືສັນຍາກ່ຽວຂ້ອງຈະຖືກເຮັດຂຶ້ນລະຫວ່າງໂຮງຮຽນ ແລະ ຜູ້ປົກຄອງ PAI (ໂຄງການຮັບຕອ້ນສ່ວນບຸກຄົນ).

ຕາມກົດລະບຽບຂອງປະເທດຝຣັ່ງ ການຢ້ຽມຢາມທາງການແພດຈະຖືກຈັດຂຶ້ນສຳລັບນັກຮຽນຊັ້ນ GS ແລະ ຊັ້ນ CM2.

- **ຄວາມປອດໄພທາງດ້ານຮ່າງກາຍ ແລະ ຈິດໃຈ**:

- ຫ້າມພຶດຕິກຳທີ່ຮຸນແຮງ, ເກມການລະຫຼິ້ນ ແລະ ວັດຖຸທີ່ອັນຕະລາຍ.
- ຫ້າມນັກຮຽນເຮັດທຸກໆພຶດຕິກຳ, ທ່າທາງ ຫຼື ຄຳເວົ້າທີ່ແຕະຕອ້ງເຖິງໜ້າທີ່ ຫຼື ບຸກຄົນທີ່ເປັນຜູ້ໃຫຍ່ ຫຼື ໝູ່ນັກຮຽນເອງ.
- ຫ້າມຄວາມຮຸນແຮງທຸກຮູບແບບໃນໂຮງຮຽນເຊັ່ນ : ການຂົ່ມຂູ່, ການເວົ້າເຍີ້ຍຍັນ, ການຄຸກຄາມ, ການລ່ວງລະເມີດ, ການສໍ້ໂກງ, ການກັ່ນແກ້ງ, ການທຳຮ້າຍຮ່າງກາຍ, ການຂູ່ເອົາຊັບສິນ...

ໂຮງຮຽນມີມາດຕະການຮັກສາຄວາມປອດໄພ ແລະ ການອົບພະຍົບ. ການຝຶກຊ້ອມລີ້ໄພໃນອາຄານ ຫຼື ໜີໄພອອກນອກອາຄານຈະຖືກປະຕິບັດ 3ຄັ້ງ ຕໍ່ປີການສຶກສາ.
ໂຮງຮຽນຈະຮັບຜິດຊອບ ແລະ ຄຸ້ມຄອງອຸບັດຕິເຫດທີ່ເກີດຂຶ້ນກັບນັກຮຽນໃນໂມງຮຽນ ແລະ ໃນໂມງກິດຈະກຳທີ່ຖືກກຳນົດໂດຍໂຮງຮຽນເທົ່ານັ້ນ.
ສຳລັບນັກຮຽນຊັ້ນອະນຸບານຜູ້ປົກຄອງງຕອ້ງມາສົ່ງ ແລະ ມາຮັບດ້ວຍຕົນເອງທີ່ຫອ້ງຮຽນຕາມໂມງຮຽນ. ຜູ້ປົກຄອງຕອ້ງຖ້າຮັບເດັກຢູ່ດ້ານໜ້າປະຕູຫອ້ງຮຽນ ແຕ່ບໍ່ໃຫ້ລໍຖ້າຕໍ່ໜ້າປ່ອງຢ້ຽມ ເພື່ອເປັນການບໍ່ລົບກວນການຮຽນຂອງເດັກໃນຫ້ອງ. ສຳລັບນັກຮຽນຊັ້ນປະຖົມ ຜູ້ປົກຄອງບໍ່ໄດ້ຮັບອະນຸຍາດໃຫ້ເຂົ້າໃນບໍລິເວນຫອ້ງຮຽນໃນໂມງຮຽນ, ຜູ້ປົກຄອງຕອ້ງມາສົ່ງ ແລະ ຖ້າຮັບເດັກທີ່ດ້ານໜ້າເດີ່ນຮັບຕອ້ນຂອງໂຮງຮຽນເທົ່ານັ້ນ.
ໃນກໍລະນີມາຮັບເດັກຊ້າຫຼັງເລີກຮຽນ, ຄອບຄົວຕອ້ງໂທແຈ້ງໂຮງຮຽນໄວທີ່ສຸດເພື່ອໃຫ້ໂຮງຮຽນສາມາດຊອກຫາວິທີຈັດການທີ່ຈຳເປັນ.
ໃນໂມງຮຽນປົກກະຕິ ແລະ ໃນໂມງກິດຈະກຳນອກໂມງຮຽນທີ່ຖືກກຳນົດ ນັກຮຽນຈະຢູ່ພາຍໄຕ້ຄວາມຮັບຜິດຊອບຂອງຄູ, ຍົກເວັ້ນກໍລະນີພິເສດ.
ບໍ່ອະນຸຍາດໃຫ້ຜູ້ປົກຄອງເຂົ້າມາໃນບໍລິເວນໂຮງຮຽນຕາມໃຈ, ຜູ້ປົກຄອງຕອ້ງແຈ້ງຂໍອະນຸຍາດເຂົ້າໃນບໍລິເວນໂຮງຮຽນກັບພະນັກງານຮັກສາຄວາມປອດໄພທີ່ປະຕູທາງເຂົ້າເພື່ອຮັບບັດຜູ້ຢ້ຽມຢາມ.
ຄອບຄົວເປັນຜູ້ຮັບຜິດຊອບເດັກໃນເວລານອກໂມງຮຽນປົກກະຕິ ແລະ ນອກໂມງກິດຈະກຳ ໂດຍສະເພາະໃນໄລຍະກອ່ນເຂົ້າຮຽນ ແລະ ຫຼັງເລີກຮຽນ.
ເພື່ອເປັນການຫຼີກລ່ຽງອຸບັດຕິເຫດທີ່ອາດເກີດຂຶ້ນ, ຜູ້ປົກຄອງຕອ້ງເອົາໃຈໃສ່ລະມັດລະວັງຄວາມປອດໄພທາງຖະໜົນໃນໄລຍະເຂົ້າ ແລະ ອອກໂຮງຮຽນ.
ຂໍ້ແນະນຳສຳລັບຜູ້ປົກຄອງທີ່ຂັບຂີ່ລົດ:

- ບໍ່ໃຫ້ກີດຂວາງການສັນຈອນຕາມຖະໜົນທ່າເດື່ອ ;
- ບໍ່ໃຫ້ກີດຂວາງທາງມ້າລາຍ ;
- ໃຫ້ລະມັດລະວັງສູງສຸດຄວາມປອດໄພໃນການໄປມາຂອງເດັກຕາມຖະໜົນ.

ຂໍແຈ້ງຕື່ມວ່າສະຖານທີ່ຈອດລົດດ້ານໃນໂຮງຮຽນແມ່ນສຳລັບພະນັກງານຂອງໂຮງຮຽນເທົ່ານັ້ນ, **ຫ້າມບຸກຄົນອື່ນຍ່າງຜ່ານ.**

- **ການຮັກສາຄວາມລັບ ແລະ ການປັບໂຕ:**
  ໂຮງຮຽນກໍຄືພະນັກງານຂອງໂຮງຮຽນຈະຮັກສາເປັນຄວາມລັບຂໍ້ມູນສວ່ນໂຕກ່ຽວກັບຄອບຄົວນັກຮຽນທີ່ປະກອບມີ ອີເມວ ແລະ ເບີຕິດຕໍ່. ໃນໄລຍະຍື່ນໃບສະໝັກຮຽນ ຫຼື ສະໝັກຮຽນຕໍ່ໃຫ້ເດັກ ຜູ້ປົກຄອງສາມາດເລືອກອະນຸຍາດ ຫຼື ບໍ່ອະນຸຍາດໃຫ້ໂຮງຮຽນເຜີຍແຜ່ອີເມວຂອງໂຕເອງໃຫ້ຜູ້ຕາງໜ້າຜູ້ປົກຄອງໃນສະມາຄົມຕ່າງໆຂອງໂຮງຮຽນ. ນອກນັ້ນຂໍ້ມູນຂອງຄອບຄົວ ແລະ ນັກຮຽນທີ່ມາໃໝ່ຈະຖືກເກັບຮັກສາໄວ້ຢ່າງດີເພື່ອຄວາມສະດວກໃນການປັບໂຕຂອງພວກເຂົາ.

## 4. ການເຄົາລົບສະຖາບັນການສຶກສາ:

ຜູ້ໃຫຍ່ ແລະ ນັກຮຽນເອງຄວນນຸ່ງຖືໃຫ້ເໝາະສົມກັບການໄຊ້ຊີວິດຮວມໝູ່ໃນໂຮງຮຽນ ແລະ ເໝາະສົມກັບສິ່ງທີ່ຈຳເປັນທີ່ເກີດຈາກການຮຽນຮູ້.
ນັກຮຽນເອງກໍ່ຄືຄອບຄົວຫ້າມບໍ່ໃຫ້ສະແດງພຶດຕິກຳ, ກິລິຍາທ່າທາງ ຫຼື ຄຳເວົ້າທີ່ແຕະຕອ້ງກຽດ ແລະ ສັກສີຂອງພະນັກງານໃນສະຖາບັນການສຶກສາ.
ເຊັ່ນດຽວກັນນັກຮຽນ ແລະ ຄອບຄົວຈົ່ງເອົາໃຈໃສ່ໃນການເຄົາລົບຊຶ່ງກັນແລະກັນໃນສະຖາບັນການສຶກສາ.
ພະນັກງານທີມງານສິດສອນຂອງໂຮງຮຽນຫ້າມສະແດງທຸກໆພຶດຕິກຳຄວາມຮຸນແຮງ, ກິລິຍາທ່າທາງ, ຄຳເວົ້າທີ່ສະແດງເຖິງການແບ່ງແຍກ ຫຼື ຄຳເວົ້າດູໝິ່ນນັກຮຽນ ຫຼື ຄອບຄົວຂອງພວກເຂົາ.
ອີງຕາມຂໍ້ກຳນົດມາດຕາ L141-5-1 ຂອງກົດໝາຍວ່າດ້ວຍການສຶກສາ, ຫ້າມນັກຮຽນໃສ່ສິ່ງຂອງທີ່ເປັນສັນຍາລັກ ຫຼື ນຸ່ງຖືທີ່ສະແດງເຖິງການເຜີຍແຜ່ສາດສະໜາ.

**ໂທລະສັບມືຖື ແລະ ອຸປະກອນເອເລັກໂທນິກອື່ນໆ : ໂທລະສັບມືຖືໄດ້ຮັບອະນຸຍາດໃຫ້ເອົາມາໂຮງຮຽນໄດ້ແຕ່ຕອ້ງມອດໄວ້ໝົດມື້ ທັງໃນໄລຍະໂມງຮຽນ, ທັງໃນໄລຍະເລີກຫຼິ້ນ ແລະ ທັງໃນໄລຍະອາຫານສວຍ. ອຸປະກອນເອເລັກໂທນິກບາງຢ່າງເຊັ່ນ: ຄອມພິວເຕີ້ຂະໜາດນອ້ຍ, ຄອມພິວເຕີ້ທົ່ວໄປ ນັກຮຽນສາມາດເອົາມາໂຮງຮຽນໄດ້ແຕ່ໃນກໍລະນີໄດ້ຮັບອະນຸຍາດຈາກຄູ ແລະ ຕອ້ງນຳໄຊ້ກ່ຽວກັບການສຶກສາເທົ່ານັ້ນ. ຖ້ານັກຮຽນຜູ້ໃດບໍ່ປະຕິບັດຕາມກົດລະບຽບໂດຍເປີດນຳໄຊ້ອຸປະກອນທີ່ກ່າວມາຂ້າງເທິງ, ຜູ້ກ່ຽວຈະຖືກຫ້າມບໍ່ໃຫ້ເອົາອຸປະກອນດັ່ງກ່າວມາໂຮງຮຽນໂດຍບໍ່ມີກຳນົດ ຊຶ່ງອາດຖືກຫ້າມຈົນເຖິງທ້າຍປີການສຶກສາ. ພາຍຫຼັງເລີກຮຽນ ແລະ ໃນກໍລະນີຈຳເປັນນັກຮຽນສາມາດຂໍໂທລະສັບຫາຜູ້ປົກຄອງໄດ້ກັບຜູ້ດູແລນັກຮຽນ ຫຼື ທີ່ຫອ້ງການເລຂາ.**

- **ການບໍ່ເຄົາລົບກົດລະບຽບຂອງໂຮງຮຽນ :**

ຄູຄວນຈຳແນກຄວາມແຕກຕ່າງລະຫວ່າງບົດລົງໂທດຕໍ່ການທີ່ນັກຮຽນມາໂຮງຮຽນຊ້າ ແລະ ຕໍ່ການບໍ່ຕັ້ງໃຈຮຽນ, ນີ້ແມ່ນຄວາມຮັບຜິດຊອບດ້ານການສິດສອນຂອງຄູທີ່ມີຜົນຕໍ່ການໄຊ້ຊີວິດໂດຍລວມໃນໂຮງຮຽນຂອງນັກຮຽນ.
ໃນກໍລະນີບໍ່ປະຕິບັດຕາມກົດລະບຽບເຫຼົ່ານີ້, ຄູຈະມີການວາງບົດລົງໂທດຕໍ່ນັກຮຽນ, ໃນກໍລະນີໃດກໍ່ຕາມບົດລົງໂທດຈະບໍ່ກ່ຽວຂອ້ງກັບການຮຽນ ຫຼື ການສອບເສັງ. ບົດລົງໂທດຈະຢູ່ໃນຮູບແບບການສຶກສາ, ສະເພາະບຸກຄົນ, ໂດຍຈະຕອ້ງອະທິບາຍໃຫ້ນັກຮຽນຮັບຊາບ ແລະ ລົງໂທດຈາກໜອ້ຍຫາຫຼາຍອີງຕາມຄວາມຜິດ, ຕອ້ງອະທິບາຍໃຫ້ເດັກຮູ້ເຖິງຄວາມຜິດຕົນເອງ.
**ສຳລັບຊັ້ນອະນຸບານ, ພາຍຫຼັງປຶກສາຫາລືກັບຜູ້ປົກຄອງ ແລະ ໂດຍໄດ້ຮັບການເຫັນດີຈາກອຳນວຍການໃຫຍ່ຂອງໂຮງຮຽນ ທ່ານອຳນວຍການຊັ້ນອະນຸບານ-ປະຖົມຖົມມີສິດໃຫ້ນັກຮຽນຢຸດຕິຮຽນຊົ່ວຄາວ. ໃນກໍລະດັ່ງກ່າວໂຮງຮຽນຈະຕິດຕໍ່ຜູ້ປົກຄອງຢ່າງສະໝໍ່າສະເໝີເພື່ອຕິດຕາມການປັບໂຕຂອງນັກຮຽນ ແລະ ເພື່ອໃຫ້ພວກເຂົາສາມາດກັບເຂົ້າມາຮຽນຄືນໃຫ້ໄວທີ່ສຸດ.**
ໃນກໍລະນີຄວາມຜິດຮ້າຍແຮງ ຜູ້ປົກຄອງ ແລະ ນັກຮຽນຈະຖືກເຊີນມາປະຊຸມກັບຄູປະຈຳຫອ້ງໂດຍການເຂົ້າຮ່ວມຂອງທ່ານອຳນວຍການຊັ້ນອະນຸບານ-ປະຖົມ ຫຼື ທ່ານອຳນວຍການໃຫຍ່ຂອງໂຮງຮຽນເພື່ອໃຫ້ຮັບຊາບນຳກັນຄວາມຜິດ, ຜົນກະທົບ ແລະ ການຍອມຮັບການປັບປຸງໂຕທີ່ຈຳເປັນ.
ເອກະສານຖືກຮັບຮອງໃນກອງປະຊຸມສະພາໂຮງຮຽນ ວັນທີ 25/06/2019.

ໄດ້ອ່ານ ແລະ ຮັບຮູ້, ຜູ້ປົກຄອງ,

ນັກຮຽນ,